ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ບໍລິສັດ ຊີມັງລາວ ມະຫາຊົນ

LAO CEMENT PUBLIC COMPANY

ບ້ານ ໂພນພະເນົາ ວຽງຈັນ, ສປປລາວ ຕູ້ ປ.ນ 6821, ໂທຣ: (865-21) 451222,451116 ແຟັກ:451117
PHONPHANAO VILLAGE VIENTIANE, LAO P.D.R. P.O.BOX 6821, TEL : (856 - 21) 451222,451116 FAX:451117
E-mail:Lcc@laocement.com,www.laocement.com

ເລກທີ 165 /ບຊລ
ນະຄອນຫລວງວຽງຈັນ, ວັນທີ 14 MAY 2024

ບົດບັນທຶກກອງປະຊຸມສາມັນຜູ້ຖືຮຸ້ນ ປະຈຳປີ 2023
ບໍລິສັດ ຊີມັງລາວ ມະຫາຊົນ

ປະຊຸມເມື່ອວັນທີ 30/04/2024 ເວລາ 09:00 - 11:45 ໂມງ ທີ່ຫ້ອງປະຊຸມຊັ້ນ 04 ສຳນັກງານໃຫຍ່ຂອງລັດວິສາຫະກິດ ພກອ. ປະທານກອງປະຊຸມໂດຍທ່ານ ເນັຍ ເຫຼຍ ປະທານສະພາບໍລິຫານຂອງ ບໍລິສັດ ຊີມັງລາວ ມະຫາຊົນ ເຊິ່ງມີຜູ້ເຂົ້າຮ່ວມກອງປະຊຸມຕົວຈິງ 23 ທ່ານ, ໃນນັ້ນມີຜູ້ຖືຮຸ້ນເຂົ້າຮ່ວມກອງປະຊຸມ 11 ທ່ານ ແລະ ມອບສັນທະ 14 ທ່ານ, ມີຮຸ້ນລວມກັນທັງໝົດ 28.043.700 ຮຸ້ນ ເທົ່າກັບ 70% ຂອງຈຳນວນຮຸ້ນທີ່ຖອກແລ້ວທັງໝົດຂອງບໍລິສັດ, ຖືວ່າຄົບອົງປະຊຸມຕາມກົດໝາຍ ແລະ ກົດລະບຽບຂອງບໍລິສັດ.

I. ປະທານກອງປະຊຸມໄດ້ກ່າວຕ້ອນຮັບແຂກ ແລະ ແນະນຳຜູ້ເຂົ້າຮ່ວມປະຊຸມ ດັ່ງນີ້ :

1. ທ່ານ ເນັຍເຫຼຍ ປະທານສະພາບໍລິຫານ ທັງເປັນຜູ້ອຳນວຍການໃຫ່ຍຂອງ ບໍລິສັດ LCC;
2. ທ່ານ ວັນທອງ ສິດທິກຸນ ຜູ້ອຳນວຍການໃຫ່ຍຂອງ ລັດວິສາຫະກິດ ພກອ ທັງເປັນຮອງປະທານສະພາບໍລິຫານຂອງ ບໍລິສັດ LCC;
3. ທ່ານ ຈ່າງ ຈິ່ງຫົວ ກຳມະການສະພາບໍລິຫານ ທັງເປັນຫົວໜ້າຝ່າຍການເງິນຂອງ ບໍລິສັດ LCC;
4. ທ່ານ ໄພວັນ ແສງພະຈັນ ຮອງຫົວໜ້າພະແນກຄຸ້ມຄອງການອອກຈຳໜ່າຍຫຼັກຊັບ, ສຄຄຊ;
5. ທ່ານ ອັດສະວິນ ຂັນທະວົງ ວິຊາການ ພະແນກຈົດທະບຽນ ແລະ ເປີດເຜີຍຂໍ້ມູນ ຕລຊລ;
6. ທ່ານ ສິນທະນູ ສົມພອງບຸດຕະຂັນ ຕາງໜ້າຜູ້ຖືຮຸ້ນລາຍຍ່ອຍ.

ຫຼັງຈາກນັ້ນ, ປະທານກອງປະຊຸມໄດ້ເລີ່ມເຂົ້າສູ່ແຕ່ລະວາລະຢ່າງເປັນທາງການ ເຊິ່ງກອງປະຊຸມຄັ້ງນີ້ ມີທັງໝົດ 09 ວາລະທີ່ຕ້ອງໄດ້ພິຈາລະນາ, ມີຄຳເຫັນ ແລະລົງຄະແນນສຽງ ດັ່ງນີ້ :

ວາລະທີ 01 : ພິຈາລະນາ ແລະຮັບຮອງ ບົດບັນທຶກກອງປະຊຸມສາມັນຜູ້ຖືຮຸ້ນຂອງ ບໍລິສັດ ຊີມັງລາວ ມະຫາຊົນ ປະຈຳປີ 2022.

ທ່ານ ເນ້ຍເຫຼ້ຍ ປະທານສະພາບໍລິຫານ ທັງເປັນຜູ້ອໍານວຍການໃຫ່ຍຂອງ ບໍລິສັດ LCC ໄດ້ລາຍງານ ບົດບັນທຶກຂອງກອງປະຊຸມສາມັນຜູ້ຖືຮຸ້ນ ບໍລິສັດ ຊີມັ້ງລາວ ມະຫາຊົນ ປະຈໍາປີ 2022 ຕໍ່ກອງປະຊຸມ ເຊິ່ງມີເນື້ອໃນລະອຽດຢູ່ໃນເອກະສານຄັດຕິດ 01.

ຈາກນັ້ນປະທານກອງປະຊຸມໄດ້ເປີດໂອກາດໃຫ້ຜູ້ຖືຮຸ້ນປະກອບຄໍາຄິດເຫັນຕໍ່ວາລະນີ້ເຊິ່ງມີຄໍາເຫັນ ແລະ ຄໍາຖາມ ດັ່ງນີ້ :

- ທ່ານ ໄກວັນ ກາດາວານິ Mr Kraiwal Kadavanich ຕາງໜ້າສະມາຄົມຜູ້ຖືຮຸ້ນໄທ ໄດ້ປະກອບຄໍາເຫັນວ່າ: ເດືອນ ມັງກອນ ປີ 2023 ທາງບໍລິສັດໄດ້ຈັດກອງປະຊຸມວິສາມັນຜູ້ຖືຮຸ້ນ ແຕ່ວ່າບໍ່ໄດ້ເອົາບົດບັນທຶກກອງປະຊຸມວິສາມັນຜູ້ຖືຮຸ້ນດັ່ງກ່າວ ມາຮັບຮອງຜ່ານກອງປະຊຸມສາມັນຜູ້ຖືຮຸ້ນປະຈໍາປີ 2023 ໃນຄັ້ງນີ້, ນອກຈາກນັ້ນ, ສະນັ້ນ, ເພື່ອແກ້ໄຂບັນຫາດັ່ງກ່າວນັ້ນ, ສະເໜີໃຫ້ສາຍບົດບັນທຶກກອງປະຊຸມວິສາມັນຜູ້ຖືຮຸ້ນດັ່ງກ່າວຢູ່ໜ້າຈໍເລີຍ ເພື່ອໃຫ້ບັນດາຜູ້ຖືຮຸ້ນພິຈາລະນາ ແລະ ປະກອບຄໍາເຫັນຕໍ່ບົດບັນທຶກກອງປະຊຸມວິສາມັນຜູ້ຖືຮຸ້ນດັ່ງກ່າວ.

- ທ່ານ ອັນທອງ ສິດທິກຸນ ຮອງປະທານສະພາບໍລິຫານ ເຫັນດີຕາມຄໍາສະເໜີຂອງ ທ່ານ ໄກວັນ ກາດາວານິ ແລະ ໄດ້ມອບໃຫ້ພະນັກງານສາຍບົດບັນທຶກກອງປະຊຸມວິສາມັນຜູ້ຖືຮຸ້ນດັ່ງກ່າວຢູ່ໜ້າຈໍ.

ຜ່ານການພິຈາລະນາ ແລະການລົງຄະແນນສຽງ ກອງປະຊຸມໄດ້ມີມະຕິຮັບຮອງດ້ວຍຄະແນນສຽງສ່ວນຫຼາຍຂອງຜູ້ຖືຮຸ້ນທີ່ເຂົ້າຮ່ວມກອງປະຊຸມ ດັ່ງນີ້ :

- ເຫັນດີຈໍານວນ 28.043.700 ສຽງ, ເທົ່າກັບ 100% ຂອງຈໍານວນສຽງທັງໝົດທີ່ເຂົ້າຮ່ວມກອງປະຊຸມ.
- ບໍ່ເຫັນດີຈໍານວນ 0 ສຽງ, ເທົ່າກັບ 0% ຂອງຈໍານວນສຽງທັງໝົດທີ່ເຂົ້າຮ່ວມກອງປະຊຸມ.

ວາລະທີ 02: ພິຈາລະນາ ແລະຮັບຮອງບົດລາຍງານວຽກງານການດໍາເນີນທຸລະກິດຂອງ ບໍລິສັດ ຊີມັ້ງລາວ ມະຫາຊົນ ປະຈໍາປີ 2023

ທ່ານ ເນ້ຍເຫຼ້ຍ ປະທານສະພາບໍລິຫານ ທັງເປັນຜູ້ອໍານວຍການໃຫ່ຍຂອງ ບໍລິສັດ LCC ໄດ້ລາຍງານ ບົດລາຍງານວຽກງານການດໍາເນີນທຸລະກິດຂອງ ບໍລິສັດ ຊີມັ້ງລາວ ມະຫາຊົນ ປະຈໍາປີ 2023 ຕໍ່ກອງປະຊຸມ ເຊິ່ງມີເນື້ອໃນລະອຽດຢູ່ໃນເອກະສານຄັດຕິດ 02.

ຈາກນັ້ນປະທານກອງປະຊຸມໄດ້ເປີດໂອກາດໃຫ້ຜູ້ຖືຮຸ້ນປະກອບຄໍາຄິດເຫັນຕໍ່ວາລະນີ້ ເຊິ່ງບໍ່ມີຄໍາເຫັນ ແລະ ຄໍາຖາມໃດຈາກກອງປະຊຸມ.

ຜ່ານການພິຈາລະນາ ແລະ ການລົງຄະແນນສຽງ ກອງປະຊຸມໄດ້ມີມະຕິຮັບຮອງດ້ວຍຄະແນນສຽງສ່ວນຫຼາຍຂອງຜູ້ຖືຮຸ້ນທີ່ເຂົ້າຮ່ວມກອງປະຊຸມ ດັ່ງນີ້ :

- ເຫັນດີຈໍານວນ 28.043.700 ສຽງ, ເທົ່າກັບ 100% ຂອງຈໍານວນສຽງທັງໝົດທີ່ເຂົ້າຮ່ວມກອງປະຊຸມ.
- ບໍ່ເຫັນດີຈໍານວນ 0 ສຽງ, ເທົ່າກັບ 0% ຂອງຈໍານວນສຽງທັງໝົດທີ່ເຂົ້າຮ່ວມກອງປະຊຸມ.

ວາລະທີ 03: ພິຈາລະນາ ແລະຮັບຮອງບົດລາຍງານສະພາບການເງິນຂອງ ບໍລິສັດ ຊິມັງ ລາວ ມະຫາຊົນ ປະຈຳປີ 2023.

ທ່ານ ຈ່າງ ຈິງຫົວ ກຳມະການສະພາບໍລິຫານ ທັງເປັນຫົວໜ້າຝ່າຍການເງິນຂອງ ບໍລິສັດ LCC ໄດ້ ລາຍ ບົດລາຍງານສະພາບການເງິນຂອງ ບໍລິສັດ ຊິມັງລາວ ມະຫາຊົນ ປະຈຳປີ 2023 ຕໍ່ກອງປະຊຸມ ເຊິ່ງ ມີເນື້ອໃນລະອຽດຢູ່ໃນເອກະສານຄັດຕິດ 03.

ຈາກນັ້ນປະທານກອງປະຊຸມໄດ້ເປີດໂອກາດໃຫ້ຜູ້ຖືຮຸ້ນປະກອບຄ□າຄິດເຫັນຕໍ່ວາລະນີ້ ເຊິ່ງບໍ່ມີ ຄຳເຫັນ ແລະ ຄຳຖາມໃດຈາກກອງປະຊຸມ.

ຜ່ານການພິຈາລະນາ ແລະ ການລົງຄະແນນສຽງ ກອງປະຊຸມໄດ້ມີມະຕິຮັບຮອງດ້ວຍຄະແນນສຽງ ສ່ວນຫຼາຍຂອງຜູ້ຖືຮຸ້ນທີ່ເຂົ້າຮ່ວມກອງປະຊຸມ ດັ່ງນີ້ :

- ເຫັນດີຈຳນວນ 28.043.700 ສຽງ, ເທົ່າກັບ 100% ຂອງຈຳນວນສຽງທັງໝົດທີ່ເຂົ້າຮ່ວມກອງປະຊຸມ.
- ບໍ່ເຫັນດີຈຳນວນ 0 ສຽງ, ເທົ່າກັບ 0% ຂອງຈຳນວນສຽງທັງໝົດທີ່ເຂົ້າຮ່ວມກອງປະຊຸມ.

ວາລະທີ 04 : ພິຈາລະນາ ແລະຮັບຮອງສັນຍາວ່າດ້ວຍການຮັບເໝົາໂຄງການກໍ່ສ້າງ ເຂດຣີສອດສາກົນໜອງສີຟ້າດວງຈັນ ວັງວຽງ (ສູນຝຶກອົບຮົມວັງວຽງ ກະຊວງປ້ອງກັນ ປະເທດ)

ທ່ານ ເນ້ຍເຫຼີຍ ປະທານສະພາບໍລິຫານ ທັງເປັນຜູ້ອຳນວຍການໃຫ່ຍຂອງ ບໍລິສັດ LCC ໄດ້ລາຍ ງານ ເນື້ອໃນຂອງສັນຍາວ່າດ້ວຍການຮັບເໝົາໂຄງການກໍ່ສ້າງ ເຂດຣີສອດສາກົນໜອງສີຟ້າດວງຈັນ ວັງ ວຽງ (ສູນຝຶກອົບຮົມວັງວຽງ ກະຊວງປ້ອງກັນປະເທດ) ໂດຍຫຍໍ້ຕໍ່ກອງປະຊຸມ ເຊິ່ງມີເນື້ອໃນລະອຽດຢູ່ ໃນເອກະສານຄັດຕິດ 04.

ຈາກນັ້ນປະທານກອງປະຊຸມໄດ້ເປີດໂອກາດໃຫ້ຜູ້ຖືຮຸ້ນປະກອບຄຳຄິດເຫັນຕໍ່ວາລະນີ້ ເຊິ່ງບໍ່ມີຄຳ ເຫັນ ແລະ ຄຳຖາມໃດຈາກກອງປະຊຸມ.

ຜ່ານການພິຈາລະນາ ແລະ ການລົງຄະແນນສຽງ ກອງປະຊຸມໄດ້ມີມະຕິຮັບຮອງດ້ວຍຄະແນນສຽງ ສ່ວນຫຼາຍຂອງຜູ້ຖືຮຸ້ນທີ່ເຂົ້າຮ່ວມກອງປະຊຸມ ດັ່ງນີ້ :

- ເຫັນດີຈຳນວນ 28.043.700 ສຽງ, ເທົ່າກັບ 100% ຂອງຈຳນວນສຽງທັງໝົດທີ່ເຂົ້າຮ່ວມກອງປະຊຸມ.
- ບໍ່ເຫັນດີຈຳນວນ 0 ສຽງ, ເທົ່າກັບ 0% ຂອງຈຳນວນສຽງທັງໝົດທີ່ເຂົ້າຮ່ວມກອງປະຊຸມ.

ວາລະທີ 05: ພິຈາລະນາ ແລະຮັບຮອງສັນຍາວ່າດ້ວຍການຮັບເໝົາໂຄງການກໍ່ສ້າງ ເຂດ ສາທິດເສດຖະກິດ ອຸດສາຫະກຳ ການທ່ອງທ່ຽວ ແລະ ວັດທະນະທຳ ວັງວຽງ

ທ່ານ ເນ້ຍເຫຼີຍ ປະທານສະພາບໍລິຫານ ທັງເປັນຜູ້ອຳນວຍການໃຫ່ຍຂອງ ບໍລິສັດ LCC ໄດ້ລາຍ ງານ ເນື້ອໃນຂອງສັນຍາວ່າດ້ວຍການຮັບເໝົາໂຄງການກໍ່ສ້າງ ເຂດສາທິດເສດຖະກິດ ອຸດສາຫະກຳ ການທ່ອງທ່ຽວ ແລະ ວັດທະນະທຳ ວັງວຽງ ໂດຍຫຍໍ້ຕໍ່ກອງປະຊຸມ ເຊິ່ງມີເນື້ອໃນລະອຽດຢູ່ໃນເອກະສານ ຄັດຕິດ 05.

ຈາກນັ້ນປະທານກອງປະຊຸມໄດ້ເປີດໂອກາດໃຫ້ຜູ້ຖືຮຸ້ນປະກອບຄຳຄິດເຫັນຕໍ່ວາລະນີ້ ເຊິ່ງບໍ່ມີຄຳ ເຫັນ ແລະ ຄຳຖາມໃດຈາກກອງປະຊຸມ.

ຜ່ານການພິຈາລະນາ ແລະ ການລົງຄະແນນສຽງ ກອງປະຊຸມໄດ້ມີມະຕິຮັບຮອງດ້ວຍຄະແນນສຽງ ສ່ວນຫຼາຍຂອງຜູ້ຖືຮຸ້ນທີ່ເຂົ້າຮ່ວມກອງປະຊຸມ ດັ່ງນີ້ :

- ເຫັນດີຈຳນວນ 28.043.700 ສຽງ, ເທົ່າກັບ 100% ຂອງຈຳນວນສຽງທັງໝົດທີ່ເຂົ້າຮ່ວມກອງປະຊຸມ.
- ບໍ່ເຫັນດີຈຳນວນ 0 ສຽງ, ເທົ່າກັບ 0% ຂອງຈຳນວນສຽງທັງໝົດທີ່ເຂົ້າຮ່ວມກອງປະຊຸມ.

ວາລະທີ 06 : ພິຈາລະນາ ແລະຮັບຮອງກິດລະບຽບຂອງ ກຸ່ມບໍລິສັດ ທ່ອງທ່ຽວ ວັດທະນະທຳລາວ ມະຫາຊົນ

ທ່ານ ເນັຍເຫຼັຍ ປະທານສະພາບໍລິຫານ ທັງເປັນຜູ້ອຳນວຍການໃຫ່ຍຂອງ ບໍລິສັດ LCC ໄດ້ລາຍງານເນື້ອໃນຂອງກົດລະບຽບຂອງ ກຸ່ມບໍລິສັດ ທ່ອງທ່ຽວ ວັດທະນະທຳລາວ ມະຫາຊົນ ໂດຍຫຍໍ້ຕໍ່ກອງປະຊຸມ ເຊິ່ງມີເນື້ອໃນລະອຽດຢູ່ໃນເອກະສານຄັດຕິດ 06.

ຈາກນັ້ນປະທານກອງປະຊຸມໄດ້ເປີດໂອກາດໃຫ້ຜູ້ຖືຮຸ້ນປະກອບຄຳຄິດເຫັນຕໍ່ວາລະນີ້ ເຊິ່ງບໍ່ມີຄຳເຫັນ ແລະ ຄຳຖາມໃດຈາກກອງປະຊຸມ.

ຜ່ານການພິຈາລະນາ ແລະ ການລົງຄະແນນສຽງ ກອງປະຊຸມໄດ້ມີມະຕິຮັບຮອງດ້ວຍຄະແນນສຽງ ສ່ວນຫຼາຍຂອງຜູ້ຖືຮຸ້ນທີ່ເຂົ້າຮ່ວມກອງປະຊຸມ ດັ່ງນີ້ :

- ເຫັນດີຈຳນວນ 28.043.700 ສຽງ, ເທົ່າກັບ 100% ຂອງຈຳນວນສຽງທັງໝົດທີ່ເຂົ້າຮ່ວມກອງປະຊຸມ.
- ບໍ່ເຫັນດີຈຳນວນ 0 ສຽງ, ເທົ່າກັບ 0% ຂອງຈຳນວນສຽງທັງໝົດທີ່ເຂົ້າຮ່ວມກອງປະຊຸມ.

ວາລະທີ 07 : ພິຈາລະນາ ແລະຮັບຮອງກ່ຽວກັບການຂຶ້ນທະບຽນບັນດາບໍລິສັດລູກ

ທ່ານ ເນັຍເຫຼັຍ ປະທານສະພາບໍລິຫານ ທັງເປັນຜູ້ອຳນວຍການໃຫ່ຍຂອງ ບໍລິສັດ LCC ໄດ້ລາຍງານກ່ຽວກັບການຂຶ້ນທະບຽນບັນດາບໍລິສັດລູກ ຕໍ່ກອງປະຊຸມ ເຊິ່ງມີເນື້ອໃນລະອຽດຢູ່ໃນເອກະສານຄັດຕິດ 07.

ຈາກນັ້ນປະທານກອງປະຊຸມໄດ້ເປີດໂອກາດໃຫ້ຜູ້ຖືຮຸ້ນປະກອບຄຳຄິດເຫັນຕໍ່ວາລະນີ້ ເຊິ່ງບໍ່ມີຄຳເຫັນ ແລະ ຄຳຖາມໃດຈາກກອງປະຊຸມ.

ຜ່ານການພິຈາລະນາ ແລະ ການລົງຄະແນນສຽງ ກອງປະຊຸມໄດ້ມີມະຕິຮັບຮອງດ້ວຍຄະແນນສຽງ ສ່ວນຫຼາຍຂອງຜູ້ຖືຮຸ້ນທີ່ເຂົ້າຮ່ວມກອງປະຊຸມ ດັ່ງນີ້ :

- ເຫັນດີຈຳນວນ 28.043.700 ສຽງ, ເທົ່າກັບ 100% ຂອງຈຳນວນສຽງທັງໝົດທີ່ເຂົ້າຮ່ວມກອງປະຊຸມ.
- ບໍ່ເຫັນດີຈຳນວນ 0 ສຽງ, ເທົ່າກັບ 0% ຂອງຈຳນວນສຽງທັງໝົດທີ່ເຂົ້າຮ່ວມກອງປະຊຸມ.

ວາລະທີ 08: ພິຈາລະນາ ແລະຮັບຮອງກ່ຽວກັບການຊື້ຮຸ້ນຂອງສູນຜະລິດຮູບເງົາ-ໂທລະພາບລາວ

ທ່ານ ເນັຍເຫຼັຍ ປະທານສະພາບໍລິຫານ ທັງເປັນຜູ້ອຳນວຍການໃຫ່ຍຂອງ ບໍລິສັດ LCC ໄດ້ລາຍງານກ່ຽວກັບການຊື້ຮຸ້ນຂອງສູນຜະລິດຮູບເງົາ-ໂທລະພາບລາວ ຕໍ່ກອງປະຊຸມ ເຊິ່ງມີເນື້ອໃນລະອຽດຢູ່ໃນເອກະສານຄັດຕິດ 08.

ຈາກນັ້ນປະທານກອງປະຊຸມໄດ້ເປີດໂອກາດໃຫ້ຜູ້ຖືຮຸ້ນປະກອບຄຳຄິດເຫັນຕໍ່ວາລະນີ້ ເຊິ່ງບໍ່ມີຄຳເຫັນ ແລະ ຄຳຖາມໃດຈາກກອງປະຊຸມ.

ຜ່ານການພິຈາລະນາ ແລະ ການລົງຄະແນນສຽງ ກອງປະຊຸມໄດ້ມີມະຕິຮັບຮອງດ້ວຍຄະແນນສຽງສ່ວນຫຼາຍຂອງຜູ້ຖືຮຸ້ນທີ່ເຂົ້າຮ່ວມກອງປະຊຸມ ດັ່ງນີ້ :

- ເຫັນດີຈຳນວນ 28.043.700 ສຽງ, ເທົ່າກັບ 100% ຂອງຈຳນວນສຽງທັງໝົດທີ່ເຂົ້າຮ່ວມກອງປະຊຸມ.
- ບໍ່ເຫັນດີຈຳນວນ 0 ສຽງ, ເທົ່າກັບ 0% ຂອງຈຳນວນສຽງທັງໝົດທີ່ເຂົ້າຮ່ວມກອງປະຊຸມ.

ວາລະທີ 09: ພິຈາລະນາ ແລະຮັບຮອງກ່ຽວກັບການປ່ຽນແປງຂອງຜູ້ບໍລິຫານຂັ້ນສູງ

ທ່ານ ເນ້ຍເຫຼຍ ປະທານສະພາບໍລິຫານ ທັງເປັນຜູ້ອຳນວຍການໃຫ່ຍຂອງ ບໍລິສັດ LCC ໄດ້ລາຍງານກ່ຽວກັບການປ່ຽນແປງຂອງຜູ້ບໍລິຫານຂັ້ນສູງ ຕໍ່ກອງປະຊຸມ ເຊິ່ງມີເນື້ອໃນລະອຽດຢູ່ໃນເອກະສານຄັດຕິດ 09.

ຈາກນັ້ນປະທານກອງປະຊຸມໄດ້ເປີດໂອກາດໃຫ້ຜູ້ຖືຮຸ້ນປະກອບຄຳຄິດເຫັນຕໍ່ວາລະນີ້ ເຊິ່ງບໍ່ມີຄຳເຫັນ ແລະ ຄຳຖາມໃດຈາກກອງປະຊຸມ.

ຜ່ານການພິຈາລະນາ ແລະ ການລົງຄະແນນສຽງ ກອງປະຊຸມໄດ້ມີມະຕິຮັບຮອງດ້ວຍຄະແນນສຽງສ່ວນຫຼາຍຂອງຜູ້ຖືຮຸ້ນທີ່ເຂົ້າຮ່ວມກອງປະຊຸມ ດັ່ງນີ້ :

- ເຫັນດີຈຳນວນ 28.043.700 ສຽງ, ເທົ່າກັບ 100% ຂອງຈຳນວນສຽງທັງໝົດທີ່ເຂົ້າຮ່ວມກອງປະຊຸມ.
- ບໍ່ເຫັນດີຈຳນວນ 0 ສຽງ, ເທົ່າກັບ 0% ຂອງຈຳນວນສຽງທັງໝົດທີ່ເຂົ້າຮ່ວມກອງປະຊຸມ.

ຈາກນັ້ນ, ທ່ານ ສົມທະນູ ສົມພອງບຸດຕະຂັນ ຜູ້ຄວບຄຸມຄະແນນສຽງ ໄດ້ນັບກວດຜົນການລົງຄະແນນສຽງ ແລະ ແຈ້ງຜົນການລົງຄະແນນສຽງຂອງແຕ່ລະວາລະຕໍ່ກອງປະຊຸມ.

ສຸດທ້າຍ, ປະທານກອງປະຊຸມໄດ້ປະກາດວ່າ ວາລະທັງໝົດມີ 09 ຂໍ້ໃນກອງປະຊຸມຄັ້ງນີ້ແມ່ນຜ່ານໄປດ້ວຍຜົນສຳເລັດອັນຈົບງາມ, ພ້ອມກັນນັ້ນ, ໄດ້ກ່າວປິດກອງປະຊຸມໃນເວລາ 11:45 ໂມງຂອງວັນດຽວກັນ.

ປະທານກອງປະຊຸມ

ເນ້ຍເຫຼຍ

ຜູ້ບັນທຶກ